ນິທານພື້ນເມືອງເຜົ່າມົ້ງ

# ເວົ້າດີມີປະໂຫຍດ



ໂດຍ: ອຸທິບ ບຸນຍາວົງ

| | |
|---|---|
| ***ເວົ້າດີ ມີປະໂຫຍດ*** | ນິທານພື້ນເມືອງເຜົ່າມົ້ງ |
| *ອຸທິນ ບຸນຍາວົງ* | ຂຽນເລື່ອງ |
| *ກົງພັດ ຫລວງຣາດ* | ແຕ້ມຮູບປະກອບ |


| | |
|---|---|
| ພິມທີ່ | ໂຮງພິມແຫ່ງລັດ |
| ທະບຽນເລກທີ | 20/ພຫປ/99 |
| ຈຳນວນພິມ | 4.000 ຫົວ |
| ພິມຄັ້ງທີ III | ມີນາ 1999 |


© ສະຫງວນລິຂະສິດ ດວງເດືອນ ບຸນຍາວົງ

**ພິມແຈກຢາຍ ຕາມໂຄງການສົ່ງເສີມການອ່ານ**

A.L.2

## ນິທານພື້ນເມືອງເຜົ່າມົ້ງ

# ເວົ້າດີ ມີປະໂຫຍດ

**ໂດຍ ອຸທິນ ບຸນຍາວົງ**

ASSOCIATION FOR SENDING PICTURE BOOK
TO LAO CHILDREN [illegible]

ຈັດພິມໂດຍ

ຫໍສະຫມຸດແຫ່ງຊາດ

ອຸປະຖຳໂດຍ

*ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ*

ASPB

**ມູນນິທິ ອິໂຕຈຸ ITOCHU FOUNDATION**

ວຽງຈັນ ສ.ປ.ປ. ລາວ 1999

# ອ່ານນິທານ ແລ້ວໄດ້ຫຍັງແດ່

ໂຄງການສົ່ງເສີມການອ່ານແຫ່ງຊາດ ທີ່ເລີ່ມຕົ້ນປີ 1990 ຈະສິ້ນສຸດລົງໃນປີ 2003. ແຕ່ການແຈກຢາຍຕູ້ປຶ້ມ, ກົງປຶ້ມ ຫລືສ້າງຫໍສະໝຸດນ້ອຍໆ ໃຫ້ແກ່ໂຮງຮຽນປະຖົມ ກັບມັດທະຍົມ ສຳເລັດໄປພຽງ 60% ທັງນີ້ ຍ້ອນສາເຫດຫລາຍອັນ ເຊັ່ນ ຈຳນວນໂຮງຮຽນເພີ່ມຂຶ້ນ, ງົບປະມານຈັດຊື້ອຸປະກອນບໍ່ພຽງພໍ, ພະນັກງານມີຈຳກັດ, ການສ້າງປຶ້ມອ່ານທີ່ເໝາະສົມກັບເດັກນ້ອຍຍັງບໍ່ທັນພຽງພໍ, ການອອກວາລະສານສົ່ງເສີມການອ່ານໂດຍກົງ ກໍ່ຍັງບໍ່ມີ. ນອກຈາກງົບປະມານຂອງລັດແລ້ວ ຜ່ານມາ ທາງໂຄງການໄດ້ຮັບການສະໜັບສະໜູນຊ່ອຍເຫລືອລ້າ ຈາກອົງການສາກົນ, ສະຖານທູດຕ່າງໆ ໃນ ສ.ປ.ປ.ລາວ, ອົງການພັດທະນາເອກະຊົນ ( NGO'S ) ທີ່ປະຕິບັດງານຢູ່ລາວ, ເພື່ອນມິດຊາວລາວ ແລະ ຕ່າງດ້າວ ທັງພາຍໃນ ແລະ ຕ່າງປະເທດ.

ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ ( ASPB ) ເປັນໜຶ່ງໃນບັນດາອົງການດັ່ງກ່າວ ທີ່ໃຫ້ການອຸປະຖຳແກ່ໂຄງການສົ່ງເສີມການອ່ານຂອງພວກເຮົາ ມາເປັນປະຈຳໃນຫລາຍຮູບຫລາຍແບບ ເຊັ່ນວ່າ ໃຫ້ງົບປະມານສຳລັບຕູ້ປຶ້ມ, ໃຫ້ທຶນ ແລະຈັດຫາຜູ້ຊ່ຽວຊານມາເຝິກອົບຮົມສຳມະນາໃຫ້ຜູ້ຮັບຜິດຊອບຕູ້ ຫລືກົງປຶ້ມ, ຫ້ອງຮັກອ່ານ, ລົງແຈກຢາຍຕູ້ປຶ້ມ ແລະອັນສຳຄັນທີ່ສຸດ ແມ່ນທຶນພິມປຶ້ມ ແລະ ຊື້ປຶ້ມລາວ ແລະ ຕ່າງປະເທດມາໃສ່ຕູ້, ໃຫ້ທຶນຕັ້ງຫ້ອງອ່ານ ພ້ອມອຸປະກອນ ແລະ ອື່ນໆ.

ການຈັດພິມນິທານພື້ນເມືອງຮຽບຮຽງເປັນຄຳທຳມະດາ ເປັນເລື່ອງໜຶ່ງ ທີ່ທາງສະມາຄົມໄດ້ສົ່ງເສີມເປັນພິເສດ ນັບແຕ່ການເລືອກເຟັ້ນເລື່ອງ, ການໃຊ້ພາສາທີ່ເໝາະສົມກັບເດັກນ້ອຍ ການສ້າງນັກແຕ້ມ ນັກຂຽນລາວ ໃຫ້ມີຄວາມສາມາດແຕ້ມຮູບ ແລະແຕ່ງລະຄອນເຈ້ຍ (ກາມິຊິບາຍ). ນັບວ່າເປັນຄວາມພະຍາຍາມທີ່ໜ້າສັນລະເສີນ ແລະ ເປັນປະໂຫຍດແກ່ເດັກນັກຮຽນທີ່ສຸດ. ນິທານທີ່ຈັດພິມໃນຊຸດນີ້ ມີເລື່ອງ ທ້າວກ່ຳພ້າ-ຜີນ້ອຍ, ຂຸນລູ-ນາງອົ້ວ ແລະ ເວົ້າດີມີປະໂຫຍດ ລ້ວນແຕ່ເປັນນິທານພື້ນເມືອງທີ່ໄດ້ຮັບຄວາມນິຍົມຊົມຊອບມາແລ້ວຫລາຍເຊັ່ນຄົນ ແລະ ມາໃນຍຸກນີ້ ກໍ່ໄດ້ຈັດພິມມາແລ້ວຫລາຍເທື່ອ ເຖິງຈະເປັນນິທານແບບອະພິນິທານ ແຕ່ເນື້ອເລື່ອງມີສິນທຳ ຄຳສອນ ທີ່ໃຊ້ໄດ້ທຸກຍຸກສະໄໝ ມີລັກສະນະສາກົນເພາະສົ່ງເສີມຄວາມກ້າຫານ, ຄວາມເສຍສະລະ, ຄວາມເມດຕາອາລີຕໍ່ກັນ ແລະ ກັນ, ຄວາມຮັກ

ອັນຊື່ສັດບໍລິສຸດ. ການໄດ້ອ່ານ ຫລືໄດ້ຟັງນິທານທີ່ມີເນື້ອໃນງາມໆ ດີໆ ເລື້ອຍໆ ຈະເຮັດໃຫ້ເດັກນ້ອຍມີໃຈງົດງາມໄປນຳ, ມັນຈະຄ່ອຍໆຫລໍ່ຫລອມຈິດໃຈເຂົາ ໃຫ້ໂອບອ້ອມອາລີ ມີສິນທຳ. ການອ່ານປຶ້ມແມ່ນວິທີພັດທະນາແນວຈິດໃຈ ແລະ ແນວທາງການປະພຶດປະຕິບັດ ສ່ວນໃດສ່ວນໜຶ່ງ, ເປັນການເປີດຫູເປີດຕາໃຫ້ແຈ້ງ ມີທັດສະນະກວ້າງຂວາງອອກ.

ໂຄງການສົ່ງເສີມການອ່ານຂອງພວກເຮົາ ກໍ່ແມ່ນສ່ວນໜຶ່ງຂອງວຽກງານການພັດທະນາຊັບພະຍາກອນມະນຸດ ທີ່ພັກ ແລະ ລັດຖະບານແຫ່ງ ສ.ປ.ປ. ລາວ ໄດ້ຮຽກຮ້ອງໃຫ້ທຸກພາກສ່ວນສົມທົບ ໃຫ້ຄວາມຮ່ວມມື. ການປະກອບທຶນຈັດພິມປຶ້ມ ເພື່ອແຈກຢາຍຕາມໂຄງການສົ່ງເສີມການອ່ານ ຈຶ່ງແມ່ນສ່ວນປະກອບສຳຄັນອັນໜຶ່ງ ຢູ່ໃນວຽກງານນີ້. ຂໍສະແດງຄວາມຮູ້ບຸນຄຸນ ແລະ ຊົມເຊີຍຢ່າງຈິງໃຈ ມາຍັງ ຄະນະສະມາຄົມ ASPB, ຊາວຍີ່ປຸ່ນຜູ້ຫ່ວງໃຍ ຮັກແພງເດັກນ້ອຍລາວດ້ວຍ. ຂໍອຳນວຍອວຍໄຊໃຫ້ບັນດາທ່ານ ມີຄວາມສຸກຄວາມຈະເລີນຍິ່ງໆຂຶ້ນໄປດ້ວຍ.

ວຽງຈັນ, ວັນທີ 5 ເມສາ 1999

ກົງເດືອນ ເນດຕະວົງ

ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດ

ຜູ້ອຳນວຍການຫໍສະໝຸດແຫ່ງຊາດ

ດົນນານມາແລ້ວ ມີຜົວເມຍຊາວມົ້ງຄູ່ໜຶ່ງ ຢູ່ເຮືອນນ້ອຍແຄມຫ້ວຍ
ເຂົາເຈົ້າເປັນຄົນທຸກຍາກ.





ຂັ້ນຕົ້ນ ເຂົາເຈົ້າມີຫມູໂຕຫນຶ່ງ
ແລະ ໄກ່ໂຕຫນຶ່ງ.



ໄກ່ໂຕນີ້ເປັນໄກ່ຕໍ່, ຜູ້ຜົວຮັກໄກ່ໂຕນີ້ຫລາຍ
ກ່ອນຈະອອກໄປໄຮ່ ລາວຢືນແຍງໄກ່
ແລະ ເອົາເຫຍື່ອໃຫ້ມັນກິນ.



ຜູ້ເປັນເມຍຢູ່ບ້ານ ເຮັດວຽກເຮືອນ ແລະ ເບິ່ງສັດລ້ຽງ.





ມື້ໜຶ່ງ ຂະນະທີ່ນາງກວາດເຮືອນຢູ່
ກໍ່ມີຊາຍແປກໜ້າມາຢາມ.



ປາກົດວ່າ ຊາຍຄົນນີ້ເປັນພະຍາ, ເພິ່ນມາເລາະຢາມປະຊາຊົນ ດົນແລ້ວ ທີ່ເພິ່ນບໍ່ໄດ້ມາຮອດເຂດນີ້.

ພະຍາເວົ້າວ່າ: "ມາຢາມຄາວໜຶ່ງທໍ່ນັ້ນ, ບໍ່ໃຫ້ຫຍຸ້ງຍາກນຳເດີ້."



ນາງດີໃຈຫລາຍ ທີ່ພະຍາມາຢາມຮອດເຮືອນ, ນາງເວົ້າວ່າ:
"ຂໍເຊີນກິນເຂົ້ານຳສາກ່ອນ ແລ້ວພະຍາຈຶ່ງຄ່ອຍໄປຢາມຜູ່ອື່ນ."



ນາງຄຶດບໍ່ອອກວ່າ ຈະເອົາຫຍັງມາແຕ່ງກິນ
ສູ່ພະຍາ, ໄກ່ໂຕດຽວ ແຕ່ຊ້ຳພັດແມ່ນໄກ່ຕໍ່,
ຈະຂ້າຫມູ ກໍ່ເປັນເລື່ອງຍາກ
ເພາະນາງບໍ່ເຄີຍ.





ເພື່ອໃຫ້ທັນເວລາຄາບເຂົ້າສວາຍ ນາງຈຶ່ງຂ້າໄກ່ຕໍ່
ຊຶ່ງຜົວແພງທີ່ສຸດນັ້ນ ແລ້ວເຮັດແກງສູ່ພະຍາກິນ.



ພະຍາກິນເຂົ້າອິ່ມແລ້ວ ກໍ່ລາຈາກນາງໄປດ້ວຍຄວາມຄິດຮອດ
ແລະ ຊື່ນຊົມໃນຄວາມດີຂອງນາງ.



ຕອນແລງ ຜົວຂອງນາງກັບຈາກໄຮ່
ເປ້ຟືນມາພ້ອມ.



ລາວວາງເປ້ຟືນໄວ້ແລ້ວ ກົງໄປຫາບ່ອນໄກ່ຢູ່
ແຕ່ບໍ່ເຫັນໄກ່ ລາວແປກຕ່າງໃນໃຈ.



ລາວຖາມເມຍວ່າ: " ໄກ່ໄປໃສ "
ເມຍຕອບວ່າ: " ພະຍາມາຢາມ ຂ້ອຍເລີຍຂ້າໄກ່ສູ່ເພິ່ນກິນ. "



ຜົວໃຈຮ້າຍ ຈຶ່ງຮ້າຍດ່າເມຍຢ່າງຮຸນແຮງວ່າ:
" ຈັ່ງແມ່ນໂພດ! ຖ້າແມ່ນໄກ່ທຳມະດາ ຊິບໍ່ວ່າຫຍັງ
ອັນນີ້ມັນແມ່ນໄກ່ຕໍ່ ... "



ເມຍເຫັນຜົວຮ້າຍຫລາຍ ຢ້ານຖືກຕີບຕີ ຈຶ່ງຮ້ອງໄຫ້
ແລະ ແລ່ນໄປຫາຄອບຄົວທີ່ຢູ່ຟາກຫ້ວຍອີກເບື້ອງຫນຶ່ງ.



ພະຍາກຳລັງຢ້ຽມຢາມໄທເຮືອນນີ້ຢູ່ ພໍເຫັນນາງ
ພະຍາກໍ່ຖາມວ່າ: " ເປັນຫຍັງເຈົ້າຈຶ່ງຮ້ອງໄຫ້? "



ນາງຕອບວ່າ: " ຜົວຮ້າຍດ່າຂ້ານ້ອຍ ຍ້ອນວ່າຂ້ານ້ອຍ
ຂ້າໄກ່ສູ່ພະຍາກິນ ລາວວ່າ ມັນບໍ່ສົມກຽດພະຍາ
ລາວຢາກໃຫ້ຂ້າຫມູສູ່ພະຍາກິນ. "



ພະຍາເຂົ້າໃຈເລື່ອງ ຈຶ່ງພ້ອມກັບນາງ ຕ່າວຄືນມາອີກ.

ພະຍາເວົ້າວ່າ: "ທັງສອງຄົນພວກເຈົ້າເປັນຄົນດີ ມີນ້ຳໃຈກວ້າງຂວາງ."



ເພື່ອຕອບແທນຄວາມມີນ້ຳໃຈຂອງຜົວເມຍຄູ່ນີ້
ພະຍາໄດ້ເອົາແກ້ວແຫວນ ແລະ ເງິນຄຳຈຳນວນຫນຶ່ງໃຫ້ເຂົາເຈົ້າ.
ນັບແຕ່ນັ້ນມາ ສອງຜົວເມຍກໍ່ມີຊີວິດຢູ່ຢ່າງຜາສຸກສຳລານ,
ເຂົາເຈົ້າຮັກແພງກັນໄປຕະຫລອດຊີວິດ.

OCIATION FOR SENDING PICTURE BOOKS
TO LAO CHILDREN FO JAPAN



ຮູບພາບເຄື່ອນໄຫວສະມາຄົມ



ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ ASPB ຕັ້ງຢູ່ເຮືອນເລກທີ 053/3 ຖະໜົນສາມແສນໄທ ບ້ານສີຫອມ ກຳແພງນະຄອນ ໂທລະສັບ 213449 ມີຫ້ອງສະໝຸດ ແລະ ສະຖານທີ່ໃຫ້ເດັກນ້ອຍມາເຄື່ອນໄຫວ ເຮັດກິດຈະກຳຕ່າງໆ ພາຍໃຕ້ການດູແລຂອງນັກວິຊາການ ຜູ່ຊ່ຽວຊານ ເຊັ່ນ ນຳພາອ່ານນິທານ ຫລີ້ນລະຄອນ ຟ້ອນ ຮ້ອງເພງ ດົນຕີ ຮຽນພາສາ ພັບເຈ້ຍ ແຕ້ມຮູບ. ເປີດໃຫ້ບໍລິການທຸກມື້ ແຕ່ວັນຈັນ ຫາວັນອາທິດ ເວັ້ນວັນພັກທາງການໃນອາທິດ ຕັ້ງແຕ່ 8.30 ມ ເຊົ້າ ເຖິງ 16.00 ໂມງ.

ອຸປະຖຳໂດຍ
ສະມາຄົມສົ່ງປຶ້ມໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ

ໂຄງການພິມເລື່ອງສຳລັບເດັກ

**Sponsored by**
**ASSOCIATION FOR SENDING BOOKS**
**TO LAO CHILDREN OF JAPAN**